ວິທຍຸເອເຊັຽເສຣີ

# ປະເມີນຜົນກະທົບ ສິ່ງແວດລ້ອມ ພະລັງງານລົມ ເຈືອງເຊີນຄືນໃໝ່

**ໄຊຍາ**
2024.05.07



***ນີ້ເປັນພຽງຮູບປະກອບ ເຊິ່ງແມ່ນໂຄງການໄຟຟ້າພະລັງງານລົມແຫ່ງໜຶ່ງ ໃນແຂວງເຊກອງ. ວັນທີ 19 ເດືອນມີນາ 2024.***

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຈັດກອງປະຊຸມເພື່ອປຶກສາຫາລື ແບບມີສ່ວນຮ່ວມກ່ຽວກັບບົດປະເມີນຜົນ ກະທົບສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງຕິດຕາມກວດກາສິ່ງແວດລ້ອມ ໂຄງການພະລັງງານລົມເຈືອງເຊີນ ທີ່ຕັ້ງຢູ່ເມືອງຄຳເກີດ ແລະ ເມືອງໄຊຈຳພອນ ແຂວງລິຄຳໄຊ ເມື່ອວັນທີ 03 ພຶດສະພາ 2024 ຜ່ານມາ.

ໂຄງການພະລັງງານລົມ ເຈືອງເຊີນ ແມ່ນລັດຖະບານຮັບຜິດຊອບໂດຍກົງ ໃນການເຮັດໂຄງການ ແລະ ຮັບຜິດຊອບການສຶກສາທັງໝົດ. ເຊິ່ງປັດຈຸບັນໂຄງການດັ່ງກ່າວ ຍັງຢູ່ໃນຂັ້ນຕອນ ການສຶກສາຄວາມເປັນໄປໄດ້.

ດັ່ງເຈົ້າໜ້າທີ່ກ່ຽວຂ້ອງ ກັບໂຄງການຢູ່ແຂວງບໍລິຄຳໄຊ ທ່ານກ່າວຕໍ່ວິທຍຸເອເຊັຽເສຣີ ໃນວັນທີ 07 ພຶດສະພາ 2024 ນີ້ວ່າ:

*"ຍັງຢູ່ໃນຂັ້ນຕອນເພິ່ນສຶກສາ ຢູ່ເຈົ້າຍັງບໍ່ທັນແລ້ວເທື່ອສຶກສາທີ່ວ່າຄົບຊຸດຫັ້ນແຫຼະ ກ່ຽວກັບໂຄງການແບບວ່າເປັນໄປໄດ້ບໍ່ ຕົວນີ້ເປັນໂຄງການຂອງລັດຖະບານ ສ່ວນຫຼາຍລັດຖະບານເປັນຜູ້ເຊັນເລີຍ ບໍ່ແມ່ນຂັ້ນແຂວງເພິ່ນຈະລາຍງານ ໃຫ້ກະຊວງ ເລີຍເຈົ້າເພາະວ່າ ກະຊວງເພິ່ນເປັນຜູ້ຮັບຜິດຊອບ ໂຄງການເຂດນັ້ນກໍສິຕິດພັນກັບປ່າ ສະຫງວນປ່າຫຍັງ ແຕ່ປ່າຫຼາຍແຕ່ ເຮົາກໍ່ບໍ່ຮູ້ວ່າ ຖືກຫຼາຍຖືກໜ້ອຍ."*

ປັດຈຸບັນໂຄງການ ດັ່ງກ່າວໄດ້ເລີ່ມບຸກເບີກເສັ້ນທາງຢູ່ບໍລິເວນພູ ແລ້ວໂດຍບຸກເບີກເສັ້ນທາງມາຕັ້ງແຕ່ເດືອນມັງກອນທີ່ ຜ່ານມາ. ສ່ວນບໍລິເວນພູທີ່ບຸກເບີກນັ້ນ ສ່ວນໃຫຍ່ເປັນພື້ນທີ່ອຸທິຍານ ນາກາຍ-ນ້ຳເທີນ.

ດັ່ງຊາວບ້ານ ນາແປ ເມືອງຄຳເກີດ ແຂວງບໍລິຄຳໄຊ ທ່ານກ່າວວ່າ:

*"ໂອເຂົາກຳລັງເລັ່ງເຮັດທາງຢູ່ ທາງມັນຊອດກັນໝົດແລ້ວ ເຂົາເຮັດມັນຮອດກັນໝົດແລ້ວ ມັນເປັນພູຄາພູຫຍັງນີ້ແຫຼະ ຕັດ ເສັ້ນພູຄາເຮົາກໍ່ບໍ່ຮູ້ປານໃດເປັນດິນປ່າ ສະຫງວນຂອງເທີນ 2 ນີ້ ບໍ່ໂຕດິນຊາວບ້ານມັນບໍ່ມີດອກແຖວນີ້ຫັ້ນນ່າ."*

ການບຸກເບີກເສັ້ນທາງ ເຂົ້າສູ່ບໍລິເວັນໂຄງການເຊິ່ງເປັນບ່ອນຕິດຕັ້ງ ກັງຫັນລົມມີເສັ້ນທາງບາງເສັ້ນ ທີ່ຖືກດິນປະຊາຊົນ ສ່ວນຫຼາຍ ເປັນທີ່ດິນສວນຂອງຊາວບ້ານໂດຍມີຊາວບ້ານປະມານ 20 ປາຍຄອບຄົວ ທີ່ໄດ້ຮັບຜົນກະທົບ ຈາກການບຸກ ເບີກທາງດັ່ງກ່າວ ແຕ່ກໍໄດ້ຮັບການຊົດເຊີຍແລ້ວ.

ດັ່ງຊາວບ້ານນາແປ ເມືອງຄຳເກີດ ແຂວງບໍລິຄຳໄຊ ອີກທ່ານໜຶ່ງກ່າວວ່າ:

*"ຕັດໄປຕາມຈອມພູດອຍຫັ້ນແຫຼະ ຕັດໄປຕາມສັນພູຫັ້ນເລີຍກໍມີບາງບ່ອນຢູ່ແຄມທາງໃຫຍ່ ນີ້ຖືກດິນປະຊາຊົນ ມັນຢູ່ທາງ ເລີຍເຂົາຕັດມາກໍ່ຖືກບ່ອນທາງໃຫຍ່ ບ່ອນທຳອິດບ່ອນເຂົາເຮັດສວນກໍ່ມີ ເຂົາກໍຊົດເຊີຍໃຫ້ແຕ່ກໍ່ບໍ່ຫຼາຍປານໃດ ປະມານ 20 ຄອບຄົວນີ້ບໍ່ບ່ອນທີ່ຖືກເຂົາເສຍຫາຍ."*

ປັດຈຸບັນໂຄງການ ເຮັດເຖິງຂັ້ນຕອນໃດແລ້ວເຊິ່ງຊາວບ້ານ ຜູ້ທີ່ຢູ່ເຂດດັ່ງກ່າວກໍຍັງໃຫ້ຄຳຕອບບໍ່ໄດ້ຈະແຈ້ງມີແຕ່ຄາດວ່າ ໂຄງການນີ້ເປັນຂອງຫວຽດນາມ ຍ້ອນເຫັນລົດຫວຽດນາມເຂົ້າ-ອອກຫຼາຍ.

ດັ່ງຊາວຊາວບ້ານນາແປ ເມືອງຄຳເກີດ ແຂວງບໍລິຄຳໄຊ ນາງກ່າວວ່າ:

*"ມີແຕ່ວ່າເຮັດທາງເຮັດຫຍັງລົດຫັ້ນແຫຼະ ແຕ່ວ່າຮອດຂັ້ນຕອນໃດເຮົາກໍ່ບໍ່ເຫັນ ຂອງຕົນຫວຽດຕິເຫັນລົດຫວຽດ ຫຼຸວເຂົ້າ-ອອກຄື ຊິແມ່ນອອກຫວຽດແລະ."*

ຕໍ່ກັບການປັບປຸງ ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ຂອງໂຄງການພະລງງານລົມ ເຈືອງເຊີນ ທາງວິທຍຸເອເຊັຽເສຣີ ໄດ້ຕິດຕໍ່ໄປຍັງພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ, ພະແນກກະສິກຳ ແລະ ປ່າໄມ້ແຂວງບໍລິຄຳໄຊ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມເມືອງຄຳເກີດ ແຕ່ເຈົ້າໜ້າທີ່ບໍ່ສະດວກໃຫ້ຂໍ້ມູນ.

ຕາມການລາຍງານ ໃນກອງປະຊຸມເທື່ອນີ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ແນະນຳໃຫ້ໂຄງການ ຄົ້ນຄ້ວາ ແລະປັບປຸງເອກະສານບົດປະເມີນຜົນ ກະທົບ ແຜນຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມເພີ່ມເຊັ່ນ ລົງ ສຳຫຼວດ ແລະເກັບກຳຂໍ້ມູນເນື້ອທີ່ດິນປ່າໄມ້ ໃນໂຄງການພ້ອມທັງສະເໜີ ການຫັນປ່ຽນດິນປ່າໄມ້ ເປັນດິນປະເພດອື່ນ.

ເຈົ້າຂອງໂຄງການ ກັບອົງການປົກຄອງທ້ອງຖິ່ນຂັ້ນແຂວງ ແລະ ບ້ານຕ້ອງກຳນົດງົບປະມານ ພັດທະນາທ້ອງຖິ່ນເພື່ອ ຊ່ວຍປະຊາຊົນ ໄດ້ຮັບຜົນກະທົບເຊັ່ນການສ້າງເສັ້ນທາງ ແລະ ການສົ່ງເສີມການສຶກສາ.

ໃຫ້ບູລິມະສິດແຮງງານທ້ອງຖິ່ນ ໂດຍສະເພາະບ້ານທີ່ໄດ້ຮັບຜົນກະທົບ ເຂົ້າໄປເຮັດວຽກໃນໂຄງການ, ເຈົ້າຂອງໂຄງການຕ້ອງພິຈາລະນາສະໜອງງົບປະມານ ໃຫ້ແກ່ຄະນະກຳມະການ ລົງຊຸກຍູ້ຕິດຕາມ, ກວດກາ, ແກ້ໄຂຜົນກະທົບຕໍ່ສິດທິນຳໃຊ້ທີ່ດິນ ແລະຊັບສິນເທິງໜ້າດິນ ຂອງປະຊາຊົນ.

ໃຫ້ພິຈາລະນາ ຄືກ່ຽວກັບການດຳເນີນໂຄງການ ໄຟຟ້າພະລັງງານລົມທີ່ນອນ ຢູ່ໃນເຂດອຸທິຍານນາກາຍ-ນ້ຳເທີນ ຍ້ອນອຸທິຍານມີສັນຍາ ກັບບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ.

ກວດກາຄືນກັບພື້ນທີ່ ສຳປະທານຂອງໂຄງການ ເພາະເຫັນວ່າກວມເອົາແຕ່ເມືອງຄຳເກີດ ສ່ວນເມືອງໄຊຈຳພອນແມ່ນບໍ່ມີເນື້ອທີ່ໂຄງການ ແລະ ໃຫ້ກວດກາຄືນກ່ຽວກັບການກໍ່ສ້າງ ໂຄງການວ່າຈະມີຜົນກະທົບຕໍ່ ເຂດປ່າສະຫງວນແຫ່ງຊາດ, ປ່າປ້ອງກັນແຫ່ງຊາດນຳ່ຍ່ວງ-ນ້ຳມ່ວນ ແລະ ອຸທິຍານແຫ່ງຊາດ ນ້ຳເທີນ-ນາກາຍ.

ໂດຍຂອບເຂດ ຂອງການສຶກສາໂຄງການນີ້ມີພື້ນທີ່ ທັງໝົດ 24,576 ເຮັກຕ້າຣ໌ ມູນຄ່າການລົງທຶນປະມານ 536 ລ້ານປາຍໂດລ້າຣ໌ສະຫະລັດ. ສ່ວນຮູບແບບການລົງທຶນແມ່ນ Build Operation-Business ໃນໄລຍະ 25 ປີ ຕາມກົດໝາຍກຳນົດ.

ໂຄງການໄຟຟ້າພະລັງງານລົມ ເຈືອງເຊີນຄາດວ່າ ຈະມີກຳລັງຕິດໄຟຟ້າ 600 ເມກະວັດ ໂດຍການເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງບໍລິສັດ ຮຸ້ນສ່ວນລົງທຶນ ແລະ ພັດທະນາພະລັງງານ ຫວຽດ-ລາວ ກັບ ລັດຖະບານ ສປປ ລາວ ເມື່ອວັນທີ 11 ຕຸລາ 2023. ໂຄງການນີ້ ນອນຢູ່ໃນພື້ນທີ່ ເມືອງຄຳເກີດ 3 ບ້ານ ຄືບ້ານ ນາເຮືອງ, ບ້ານນາຫາດ ແລະບ້ານທົ່ງແປ ຫຼື ບ້ານນາແປ ແລະ ເມືອງໄຊຈຳພອນສອງບ້ານ.